ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

25

ແຂວງບໍລິຄໍາໄຊ ເລກທີ................../ຂບຊ

ບໍລິຄໍາໄຊ, ວັນທີ.........12 SEP 2016

# ຄໍາສັ່ງແນະນໍາ
## ຂອງເຈົ້າແຂວງບໍລິຄໍາໄຊ
## ກ່ຽວກັບການຈັດຕັ້ງປະຕິບັດການເກັບເງິນພັນທະກອງທຶນ ພັດທະນາການທ່ອງທ່ຽວຂັ້ນແຂວງຢູ່ ດ່ານສາກົນພາຍໃນແຂວງບໍລິຄໍາໄຊ.

**ເຖິງ: ບັນດາເມືອງ, ພະແນກການ, ອົງການທຽບເທົ່າກອງບັນຊາການ ປກສ ແລະ ປກຊ, ດ່ານສາກົນ, ລັດວິສາຫະກິດ, ບຸກຄົນພາຍໃນ ແລະ ຕ່າງປະເທດ.**

- ອີງຕາມ ລັດຖະບັນຍັດປະທານປະເທດແຫ່ງ ສ ປ ປ ລາວ ສະບັບເລກທີ 003/ປທທ, ລົງວັນທີ26 ທັນວາ 2012 ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການສະບັບປັບປຸງໃໝ່.
- ອີງຕາມ ຂໍ້ຕົກລົງລັດຖະມົນຕີ ປະທານອົງການທ່ອງທ່ຽວແຫ່ງຊາດ ສະບັບເລກທີ 0135/ອທຊ.ຄທຣ, ລົງວັນທີ 1 ມີນາ 2011 ວ່າດ້ວຍການເກັບ, ການຄຸ້ມຄອງ ແລະ ການນໍາໃຊ້ ກອງທຶນການທ່ອງທ່ຽວແຫ່ງຊາດ.
- ອີງຕາມ ຂໍ້ຕົກລົງລັດຖະມົນຕີວ່າການກະຊວງ ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ສະບັບເລກທີ 1263/ຖວທ.ພຽ, ລົງວັນທີ 21 ທັນວາ 2012 ວ່າດ້ວຍການສະເລ່ຍການນໍາໃຊ້ເງິນກອງທຶນ ສົ່ງເສີມການທ່ອງທ່ຽວລະຫວ່າງສູນກາງ ແລະ ທ້ອງຖິ່ນ.
- ອີງຕາມ ຂໍ້ຕົກລົງເຈົ້າແຂວງບໍລິຄໍາໄຊ ສະບັບເລກທີ 922/ຂບຊ, ລົງວັນທີ 31 ທັນວາ 2015 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບເງິນກອງທຶນສົ່ງເສີມການທ່ອງທ່ຽວຂັ້ນແຂວງ.

ເພື່ອເຮັດໃຫ້ພະນັກງານ, ທະຫານ, ຕໍາຫຼວດນັກທຸລະກິດຊາວຄ້າຂາຍ,ຊາວຕ່າງດ້າວ, ຊາວຕ່າງປະເທດ ແລະ ປະຊາຊົນບັນດາເຜົ່າຊົນເຜົ່າຕ່າງໆ ໃນທົ່ວປະເທດເວົ້າລວມ, ເວົ້າສະເພາະແມ່ນພາຍໃນແຂວງບໍລິຄໍາໄຊຮັບຮູ້ ແລະ ເຂົ້າໃຈ ປະຕິບັດພັນ ທະຢ່າງຄົບຖ້ວນ ໃນເວລາເຂົ້າ-ອອກ ເມືອງຢູ່ດ່ານສາກົນ, ຕາມລະບຽບການເກັບເງິນກອງທຶນການທ່ອງທ່ຽວ.

☞ ເພື່ອເຮັດໃຫ້ງົບປະມານຂອງລັດ ( ກອງທຶນການທ່ອງທ່ຽວ ) ແມ່ນສ່ວນໜຶ່ງທີ່ໄດ້ມາຈາກການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ, ທັງພາຍໃນ ແລະ ຕ່າງປະເທດ ( ເສຍຄ່າພັນທະເວລາເຂົ້າ-ອອກເມືອງ ) ແລະ ນໍາໃຊ້ກອງທຶນດັ່ງກ່າວ ເພື່ອພັດທະນາ, ສົ່ງເສີມ, ຄຸ້ມຄອງການທ່ອງທ່ຽວ ຕາມລະບຽບຂອງກອງທຶນການທ່ອງທ່ຽວທີ່ໄດ້ກໍານົດໄວ້.

☞ ເພື່ອເຮັດໃຫ້ກອງທຶນການທ່ອງທ່ຽວໄດ້ປະກອບສວນ, ເຂົ້າໃນການພັດທະນາຊັບພະຍາກອນມະນຸດພັດທະນາສິ່ງອໍານວຍຄວາມສະດວກໃຫ້ແກ່ການທ່ອງທ່ຽວ, ໂຄສະນາສົ່ງເສີມການຕະຫຼາດການທ່ອງທ່ຽວ, ກໍານົດມາດຖານການທ່ອງທ່ຽວ ແລະ ເຄື່ອນໄຫວກິດຈະກໍາການທ່ອງທ່ຽວໃຫ້ແຂງແຮງຂຶ້ນກ່ອນເກົ່າ, ທັງປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມແຫ່ງລັດໄດ້ເປັນຢ່າງດີ.

## ເຈົ້າແຂວງບໍລິຄຳໄຊ ອອກຄຳສັ່ງແນະນຳດັ່ງນີ້:

1. ມອບໃຫ້ຄະນະຮັບຜິດຊອບຄຸ້ມຄອງບໍລິຫານກອງທຶນການທ່ອງທ່ຽວຂັ້ນແຂວງທີ່ໄດ້ຮັບການແຕ່ງຕັ້ງຈາກເຈົ້າແຂວງ, ຄົ້ນຄ້ວາປຶກສາຫາລືກັນວາງແຜນ, ນຳເອົາເນື້ອໃນຄຳສັ່ງສະບັບນີ້ໄປຜັນຂະຫຍາຍເປັນອັນລະອຽດຈະແຈ້ງ, ໂດຍມີການແຕ່ງຕັ້ງພະນັກງານວິຊາການຂະແໜງການທີ່ກ່ຽວຂ້ອງໄປປະຈຳດ່ານ, ເພື່ອຄຸ້ມຄອງຈັດຕັ້ງປະຕິບັດພັນທະກອງທຶນທ່ອງທ່ຽວດັ່ງກ່າວໃຫ້ໄດ້ຮັບຜົນດີຖືກຕ້ອງຕາມລະບຽບກົດໝາຍ.

2. ມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ໂຄສະນາເຜີຍແຜ່ເນື້ອໃນການທ່ອງທ່ຽວຢູ່ພາຍໃນ ແລະ ຕ່າງປະເທດ, ດ້ວຍຫຼາຍລະດັບ ແລະ ຫຼາຍຮູບຫຼາຍສີເພື່ອດຶງດູດນັກທ່ອງທ່ຽວເຂົ້າມາໃນປະເທດເຮົາ ເວົ້າລວມ, ເວົ້າສະເພາະເຂົ້າມາທ່ອງທ່ຽວແຂວງບໍລິຄຳໄຊ.

3. ພົນລະເມືອງລາວ,ຊາວຕ່າງດ້າວ ແລະ ຊາວຕ່າງປະເທດ ທີ່ເດີນທາງ ເຂົ້າ-ອອກ ດ່ານສາກົນ ຕ້ອງໄດ້ນຳເອົາເອກະສານຕ່າງໆ ໄປແຈ້ງຕໍ່ເຈົ້າໜ້າທີ່ຕຳຫຼວດ ( ຕມ ) ແລະ ພະນັກງານທີ່ກ່ຽວຂ້ອງປະຈຳດ່ານເພື່ອກວດກາ.

4. ມອບໃຫ້ຄະນະຄຸ້ມຄອງດ່ານສາກົນ ອຳນວຍຄວາມສະດວກ, ດ້ານສະຖານທີ່ພັກເຊົາຂອງພະນັກງານ ແລະ ປະສານສົມທົບຊີ້ນຳເຈົ້າໜ້າທີ່ ຕຳຫຼວດ ( ຕມ ) ປະຈຳດ່ານ ອຳນວຍຄວາມສະດວກທຸກດ້ານເພື່ອເຮັດໃຫ້ການເກັບເງິນກອງທຶນການທ່ອງທ່ຽວຖືກຕ້ອງຕາມຂັ້ນຕອນ ແລະ ລະບຽບດ້ານການເງິນ.

5. ກຳນົດເວລາຈັດຕັ້ງປະຕິບັດເລີ່ມແຕ່ວັນທີ 1 ພະຈິກ 2106 ເປັນຕົ້ນໄປ.

6. ພາຍຫຼັງຈັດຕັ້ງປະຕິບັດ, ມີຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ໃຫ້ຄະນະຮັບຜິດຊອບຄຸ້ມຄອງບໍລິຫານກອງທຶນຂັ້ນແຂວງ, ຈັດກອງປະຊຸມສະຫຼຸບຕີລາຄາ ແລະ ຊອກວິທີການແກ້ໄຂໃຫ້ໄດ້ຮັບຜົນດີ.

7. ຫ້ອງວ່າການປົກຄອງແຂວງ ແລະ ພະແນກ ຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວແຂວງ ມີໜ້າທີ່ຊ່ວຍເຈົ້າແຂວງໃນການຕິດຕາມກວດກາຈັດຕັ້ງຄຳສັ່ງສະບັບນີ້ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງພ້ອມກັນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ.

**ເຈົ້າແຂວງບໍລິຄຳໄຊ**

ປອ. ກອງແກ້ວ ໄຊສົງຄາມ

**ບ່ອນສົ່ງ:**

- ຫ້ອງວ່າການປົກຄອງແຂວງ 01 ສະບັບ.
- ພາກສ່ວນທີ່ກ່ຽວຂ້ອງ 01 ສະບັບ.
- ດ່ານສາກົນແຕ່ລະແຫ່ງ 01 ສະບັບ.
- ສຳເນົາ 07 ສະບັບ.